ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ສຳນັກງານປົກປ້ອງເງິນຝາກ ເລກທີ 02 /ສປງ

ນະຄອນຫຼວງວຽງຈັນ, ວັນທີ 29 ມັງກອນ 2021

# ຄຳແນະນຳ

# ກ່ຽວກັບ ວິທີຄິດໄລ່ ແລະ ຈ່າຍເບ້ຍປະກັນເງິນຝາກ

- ອີງຕາມ ດຳລັດວ່າດ້ວຍການປົກປ້ອງເງິນຝາກ ເລກທີ 329/ລບ, ລົງວັນທີ 25 ຕຸລາ 2017;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສຳນັກງານປົກປ້ອງເງິນຝາກ ເລກທີ 68/ທຫລ, ລົງວັນທີ 22 ມັງກອນ 2019;
- ອີງຕາມ ຂໍ້ຕົກລົງວ່າດ້ວຍອັດຕາເບ້ຍປະກັນເງິນຝາກ ເລກທີ 1196/ທຫລ, ລົງວັນທີ 31 ທັນວາ 2019.

ເພື່ອເປັນບ່ອນອີງໃຫ້ແກ່ ສະຖາບັນການເງິນທີ່ເປັນສະມາຊິກຂອງ ສຳນັກງານປົກປ້ອງເງິນຝາກ ໃນການຈັດຕັ້ງປະຕິບັດ ຂໍ້ຕົກລົງວ່າດ້ວຍອັດຕາເບ້ຍປະກັນເງິນຝາກ.

**ຫົວໜ້າສຳນັກງານປົກປ້ອງເງິນຝາກ ອອກຄຳແນະນຳ ດັ່ງນີ້:**

1. ສະມາຊິກຂອງສຳນັກງານປົກປ້ອງເງິນຝາກ ຕ້ອງເປັນເຈົ້າການຄິດໄລ່ເບ້ຍປະກັນເງິນຝາກ ໂດຍນຳໃຊ້ຍອດເຫຼືອເງິນຝາກທີ່ໄດ້ຮັບການປົກປ້ອງ ເຊັ່ນ: ເງິນຝາກຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ທີ່ຝາກໄວ້ນຳສະມາຊິກຂອງ ສຳນັກງານປົກປ້ອງເງິນຝາກ ປະກອບດ້ວຍ ເງິນຝາກກະແສລາຍວັນ (ເລກບັນຊີ 22011), ເງິນຝາກປະຢັດ (ເລກບັນຊີ 22013), ເງິນຝາກມີກຳນົດ (ເລກບັນຊີ 22015) ແລະ ເງິນຝາກທີ່ບໍ່ມີການເຄື່ອນໄຫວ (ເລກບັນຊີ 22017) ທີ່ເປັນສະກຸນເງິນກີບ ແລະ ສະກຸນເງິນຕາຕ່າງປະເທດ (ທຽບເທົ່າກີບ).

**ຍົກເວັ້ນ ບັນດາເງິນຝາກທີ່ບໍ່ໄດ້ຮັບການປົກປ້ອງ ຊຶ່ງບໍ່ໄດ້ນຳມາຄິດໄລ່ເບ້ຍປະກັນເງິນຝາກ** ດັ່ງລາຍລະອຽດຕໍ່ໄປນີ້:

1) **ເງິນຝາກຂອງຜູ້ບໍລິຫານ** ໝາຍເຖິງ ເງິນຝາກຂອງ ກຳມະການສະພາບໍລິຫານ, ຄະນະອຳນວຍການ, ຫົວໜ້າພະແນກ ແລະ ຫົວໜ້າສາຂາຂອງ ສະຖາບັນການເງິນເອງ ຫຼື ຜູ້ມີຕຳແໜ່ງທຽບເທົ່າ ທີ່ໄດ້ຮັບນະໂຍບາຍເທົ່າກັບ ຕຳແໜ່ງຜູ້ບໍລິຫານທີ່ກ່າວມານັ້ນ;

2) **ເງິນຝາກຂອງຜູ້ຖືຮຸ້ນລາຍໃຫຍ່** ໝາຍເຖິງ ເງິນຝາກຂອງ ຜູ້ຖືຮຸ້ນ ແຕ່ສິບສ່ວນຮ້ອຍ (10%) ຂຶ້ນໄປຂອງຈຳນວນຮຸ້ນທັງໝົດ ທີ່ສາມາດລົງຄະແນນສຽງໄດ້ ໃນສະຖາບັນການເງິນເອງ;

3) **ເງິນຝາກຂອງສະຖາບັນການເງິນອື່ນ** ໝາຍເຖິງ ເງິນຝາກຂອງ ທະນາຄານທຸລະກິດ, ສະຖາບັນການເງິນຈຸລະພາກ, ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ, ໂຮງຊວດຈຳ, ບໍລິສັດເຊົ່າສິນເຊື່ອ ແລະ ສະຖາບັນການເງິນອື່ນ ຊຶ່ງຢູ່ພາຍໃຕ້ການຄຸ້ມຄອງຂອງ ທະນາຄານແຫ່ງ ສປປ ລາວ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

4) **ເງິນຝາກຄັງເງິນແຫ່ງຊາດ** ໝາຍເຖິງ ເງິນຝາກຂອງການຈັດຕັ້ງບໍລິຫານວິຊາການ ທີ່ຄຸ້ມຄອງ-ບໍລິຫານເງິນຂອງລັດ ໃຫ້ລວມສູນເຂົ້າບັນຊີຄັງເງິນແຫ່ງຊາດ ຕາມລະບົບສາຍຕັ້ງໃນຂອບເຂດທົ່ວປະເທດ;

5) **ເງິນຝາກຂອງອົງການຈັດຕັ້ງລັດ** ໝາຍເຖິງ ເງິນຝາກຂອງ ອົງການຈັດຕັ້ງພັກ-ລັດ ແລະ ອົງການຈັດຕັ້ງມະຫາຊົນ ທັງຂັ້ນສູນກາງ ແລະ ທ້ອງຖິ່ນ ເຊັ່ນ: ສະພາແຫ່ງຊາດ, ລັດຖະບານ, ສະພາປະຊາຊົນ ແລະ ອຳນາດການປົກຄອງທ້ອງຖິ່ນ (ຂັ້ນແຂວງ, ເມືອງ ແລະ ບ້ານ), ສານປະຊາຊົນ, ອົງການໄອຍະການປະຊາຊົນຂັ້ນຕ່າງໆ, ສະຖານທູດ ຫຼື ສະຖານກົງສຸນຂອງ ສປປ ລາວ ທີ່ປະຈຳຢູ່ຕ່າງປະເທດ;

6) **ເງິນຝາກຂອງອົງການຈັດຕັ້ງສາກົນ** ໝາຍເຖິງ ເງິນຝາກຂອງ ອົງການຈັດຕັ້ງ ຫຼື ພາກສ່ວນທີ່ຂຶ້ນກັບຕ່າງປະເທດ ແຕ່ມີທີ່ຕັ້ງສຳນັກງານ ຢູ່ ສປປ ລາວ ເຊັ່ນ: ສະຖານທູດຂອງຕ່າງປະເທດທີ່ປະຈຳຢູ່ ສປປ ລາວ, ສະຫະປະຊາຊາດ (UN), ກຸ່ມທະນາຄານໂລກ (WBG), ທະນາຄານພັດທະນາອາຊີ (ADB), ກອງທຶນການເງິນສາກົນ (IMF), ອົງການທີ່ບໍ່ຂຶ້ນກັບລັດຖະບານ (NGO), ອົງການເພື່ອພັດທະນາແມ່ຍິງ ແລະ ເດັກນ້ອຍ (UNICEF), ອົງການຊ່ວຍເຫຼືອລ້າ (JICA ແລະ KOICA), ອົງການເກັບກູ້ລະເບີດ (UXO) ແລະ ອົງການຈັດຕັ້ງສາກົນອື່ນ;

7) **ເງິນຝາກສຳລັບຊື້-ຂາຍຫຼັກຊັບ** ໝາຍເຖິງ ເງິນຝາກຂອງບຸກຄົນ ແລະ ນິຕິບຸກຄົນ ທີ່ເຮັດທຸລະກຳຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບລາວ;

**ສຳລັບເງິນຝາກຂອງຜູ້ບໍລິຫານ ຫຼື ຜູ້ຖືຮຸ້ນລາຍໃຫຍ່** ທີ່ຝາກຮ່ວມກັບຄອບຄົວ ຫຼື ບຸກຄົນອື່ນ ຊຶ່ງເປັນບັນຊີຮ່ວມນັບແຕ່ສອງຄົນຂຶ້ນໄປ, ໃຫ້ແຍກຈຳນວນເງິນຝາກເປັນສັດສ່ວນຕາມຈຳນວນຜູ້ຝາກເງິນຕົວຈິງ ໂດຍເງິນຝາກໃນສ່ວນຂອງຜູ້ບໍລິຫານ ຫຼື ຜູ້ຖືຮຸ້ນລາຍໃຫຍ່ ແມ່ນບໍ່ໄດ້ຮັບການປົກປ້ອງ. ນອກນັ້ນ, ໃຫ້ຖືວ່າເປັນເງິນຝາກທີ່ໄດ້ຮັບການປົກປ້ອງ ແລະ ນຳມາຄິດໄລ່ເບ້ຍປະກັນເງິນຝາກ.

2. ສູດ ແລະ ວິທີຄິດໄລ່ເບ້ຍປະກັນເງິນຝາກ ແຕ່ລະໄຕມາດ ໃຫ້ປະຕິບັດ ດັ່ງນີ້:

$$P = \frac{(D_1 + D_2 + D_3)/3}{4} \times 0{,}1\%$$

P : ເບ້ຍປະກັນເງິນຝາກ (Premium)

$D_1$ : ຍອດເຫຼືອເງິນຝາກທ້າຍເດືອນ (Deposit) ເດືອນທີ 1

$D_2$ : ຍອດເຫຼືອເງິນຝາກທ້າຍເດືອນ (Deposit) ເດືອນທີ 2

$D_3$ : ຍອດເຫຼືອເງິນຝາກທ້າຍເດືອນ (Deposit) ເດືອນທີ 3

3 : ສະເລ່ຍ 3 ເດືອນ

4 : ສີ່ໄຕມາດຕໍ່ໜຶ່ງປີ

0,1% : ອັດຕາເບ້ຍປະກັນເງິນຝາກ

ຕົວຢ່າງ:

ຍອດເຫຼືອເງິນຝາກລວມທຸກສະກຸນເງິນທຽບເທົ່າກີບ ເດືອນມັງກອນ ($D_1$) : 90.000.000.000 ກີບ

ຍອດເຫຼືອເງິນຝາກລວມທຸກສະກຸນເງິນທຽບເທົ່າກີບ ເດືອນກຸມພາ ($D_2$) : 100.000.000.000 ກີບ

ຍອດເຫຼືອເງິນຝາກລວມທຸກສະກຸນເງິນທຽບເທົ່າກີບ ເດືອນມີນາ ($D_3$) : 110.000.000.000 ກີບ

$$P = \frac{(90.000.000.000+100.000.000.000+110.000.000.000)/3}{4} \times 0,1\%$$

ເບ້ຍປະກັນເງິນຝາກປະຈຳໄຕມາດທີ 1 ຈຳນວນ (P) = 25.000.000 ກີບ

3. ການປັດຈຳນວນເລກທົດສະນິຍົມຂອງຍອດລວມຜົນການຄິດໄລ່ເບ້ຍປະກັນເງິນຝາກ:

ຖ້າຫາກຕົວເລກທົດສະນິຍົມຫຼັງຈຸດ ມີ ຄ່າເສດນັບແຕ່ 5 ຂຶ້ນໄປ ໃຫ້ປັດຂຶ້ນ 1 ຈຳນວນ ຫຼື ຕໍ່າກວ່າ 5 ລົງມາ ໃຫ້ປັດລົງເປັນຈຳນວນຖ້ວນ.

**ຕົວຢ່າງ**: 2.000.001,50 ກີບ = 2.000.002 ກີບ (ສອງລ້ານສອງກີບ)

ຫຼື 2.000.001,49 ກີບ = 2.000.001 ກີບ (ສອງລ້ານໜຶ່ງກີບ)

4. ພາຍຫຼັງ ສຳເລັດການຄິດໄລ່ແລ້ວ ໃຫ້ໂອນເຂົ້າບັນຊີເງິນຝາກກະແສລາຍວັນ ຂອງສຳນັກງານປົກປ້ອງເງິນຝາກ ທີ່ເປີດໄວ້ຢູ່ກົມບໍລິການ ທະນາຄານແຫ່ງ ສປປ ລາວ ເລກບັນຊີ 00-00-00-00513-00101.

5. ກໍລະນີ ກວດພົບການຄິດໄລ່ ແລະ ຈ່າຍເບ້ຍປະກັນເງິນຝາກບໍ່ຄົບຖ້ວນ ຫຼື ເກີນຈຳນວນ, ສຳນັກງານປົກປ້ອງເງິນຝາກ ຈະແຈ້ງເປັນລາຍລັກອັກສອນເຖິງສະມາຊິກ ເພື່ອປະຕິບັດ ດັ່ງນີ້:

1) **ຄິດໄລ່ ແລະ ຈ່າຍເບ້ຍປະກັນເງິນຝາກບໍ່ຄົບຖ້ວນ:** ສະມາຊິກ ຕ້ອງຈ່າຍເບ້ຍປະກັນເງິນຝາກເພີ່ມໃຫ້ຄົບຕາມຈຳນວນທີ່ຄິດໄລ່ຕົວຈິງ;
2) **ຄິດໄລ່ ແລະ ຈ່າຍເບ້ຍປະກັນເງິນຝາກເກີນ:** ໃຫ້ສະມາຊິກຫັກລົບຈຳນວນເບ້ຍປະກັນເງິນຝາກ ທີ່ຈ່າຍເກີນ ໃນໄຕມາດຖັດໄປ.

6. ຄຳແນະນຳສະບັບນີ້ ໃຊ້ປ່ຽນແທນແຈ້ງການແນະນຳ ການຄິດໄລ່ ແລະ ການຈ່າຍເບ້ຍປະກັນເງິນຝາກ ເລກທີ 04/ສປງ, ລົງວັນທີ 13 ມັງກອນ 2020. ໃຫ້ສະມາຊິກເລີ່ມຈັດຕັ້ງປະຕິບັດ ນັບແຕ່ໄຕມາດ I ປີ 2021 ເປັນຕົ້ນໄປ.

ຫົວໜ້າສຳນັກງານປົກປ້ອງເງິນຝາກ

ແສງດາວວີ ວົງຄຳຊາວ